PHU BIA MINING – A MEMBER OF THE PANAUST GROUP OF COMPANIES
7th Floor | Capital Tower | 23 Singha Road | Saysetha District | PO Box 5559 | Vientiane Lao PDR
T: +856 21 268 000 | F: +856 21 268 029 | E: info@panaust.com.au | W: www.panaust.com.au

PHU BIA MINING

## ຂ່າວສານ

21 ຕຸລາ 2020

# ບໍລິສັດ ພູເບ້ຍ ມາຍນິງ ບໍລິຈາກລົດເກັບຕົວຢ່າງ

ໃນວັນທີ 19 ຕຸລາ, ທ່ານ ຈັນເພັງ ບຸນນະຜິນ, ປະທານບໍລິສັດ ພູເບ້ຍ ມາຍນິງ (PBM) ໄດ້ມອບລົດເກັບຕົວຢ່າງຄັນທຳອິດໃນລາວ ມູນຄ່າ 68,000 ໂດລາສະລະລັດໃຫ້ກະຊວງ ສາທາລະນະສຸກ ຢູ່ທີ່ ນະຄອນຫຼວງວຽງຈັນ. ເປັນກຽດເຂົ້າຮ່ວມໃນພິທີດັ່ງກ່າວມີ ທ່ານ ຮອງສາດສະດາຈານ ດຣ. ບຸນກອງ ສີຫາວົງ, ລັດຖະມົນຕີກະຊວງ ສາທາລະນະສຸກ.

ລົດເກັບຕົວຢ່າງດັ່ງກ່າວ ຈະຖືກນຳໃຊ້ໂດຍ ສູນວິເຄາະ ແລະ ລະບາດວິທະຍາ ເພື່ອລົງເກັບຕົວຢ່າງກວດຫາເຊື້ອໂຄວິດ-19 ແລະ ຕົວຢ່າງອື່ນໆເພື່ອການກວດວິເຄາະ ໃນທົ່ວປະເທດ, ໂດຍສະເພາະຜູ້ທີ່ອາໃສຢູ່ໃນແຂວງທີ່ຮ່າງໄກ.

ລົດເກັບຕົວຢ່າງຄັນດັ່ງກ່າວ ທີ່ຖືກຕິດຕັ້ງ ແລະ ປະກອບຄົບຊຸດເທິງລົດກະບະ ແມ່ນອອກແບບຢ່າງທັນສະໄໝ ແລະ ມີລະບົບຄົບຊຸດ ເຊິ່ງລວມມີເຄື່ອງກວດວິເຄາະ, ແອເຢັນ, ດອກໄຟ, ເຄື່ອງຂ້າເຊື້ອແບບໂອໂຊນ, ກ້ອງວົງຈອນປິດ ແລະ ໄມ້ສື່ສານ ໂດຍມີການຄວບຄຸມຢ່າງລວມສູນ. ການອອກແບບຂອງໂຕລົດເກັບຕົວຢ່າງຍັງມີອຸປະກອນປ້ອງກັນສ່ວນບຸກຄົນເຊິ່ງເຮັດໃຫ້ບຸກຄະລາກອນແພດສາມາດເກັບຕົວຢ່າງຈາກພາຍໃນໂຕລົດຜ່ານຜ້າປ້ອງກັນແຂນ.

ທ່ານ ຈັນເພັງ ບຸນນະຜິນ ກ່າວເຖິງຄວາມມຸ້ງໝັ້ນຂອງບໍລິສັດ ພູເບ້ຍ ມາຍນິງໃນການສະໜັບສະໜູນການເຂົ້າເຖິງການບໍລິການທາງການແພດໃນປະເທດ.

"ໃນພາກສ່ວນຂອງຄວາມມຸ້ງໝັ້ນຕໍ່ການພັດທະນາແບບຍືນຍົງຂອງບໍລິສັດໂດຍລວມ, ບໍລິສັດ ພູເບ້ຍ ມາຍນິງສືບຕໍ່ເຮັດວຽກນຳລັດຖະບານ ລາວ ເພື່ອຫາວິທີເພີ່ມທະວີການບໍລິການສຸຂະພາບໃຫ້ ລັດຖະບານລາວ ແລະ ປະຊາຊົນ ລາວ ແລະ ວິທີປົກປ້ອງສະຫວັດດີພາບດ້ານຄວາມປອດໄພຂອງບຸກຄະລາກອນແພດທີ່ໃຫ້ບໍລິການ.

ທ່ານ ຈັນເພັງ ກ່າວຕື່ມວ່າ: "ລົດເກັບຕົວຢ່າງດັ່ງກ່າວ ຈະຊ່ວຍໃຫ້ສູນວິເຄາະ ແລະ ລະບາດວິທະຍາ ສາມາດເດີນທາງໄປໃຫ້ບໍລິການເກັບຕົວຢ່າງເພື່ອກວດຈາກປະຊາຊົນທີ່ອາດບໍ່ສາມາດເຂົ້າເຖິງການອຳນວຍຄວາມສະດວກດັ່ງກ່າວ, ໂດຍສະເພາະຜູ້ທີ່ອາໃສຢູ່ແຂວງຮ່າງໄກໃນປະເທດ."








*ຂ້າງເທິງ: (ຈາກຊ້າຍ ຫາ ຂວາ) ທ່ານ ຈັນເພັງ ບຸນນະພົນ, ປະທານບໍລິສັດ ພູເບ້ຍ ມາຍນິງ, ທ່ານ ຮອງສາດສະດາຈານ ດຣ ບຸນກອງ ສີຫາວົງ ແລະ ຕາງໜ້າບໍລິສັດ ແລະ ພະນັກງານກະຊວງ ສາທາລະນະສຸກ ທີ່ພິທີມອບ-ຮັບລົດເກັບຕົວຢ່າງ.*

**For further information please contact:**

Keoleuthsamay Thammalangsy
T: 020 268 000
E: keoleutsamay.thammalangsy@pbm.panaust.com

Phomvihane Thiepphougphane
T: 021 268 000
E: Phomvihane.Thiepphougphane@pbm.panaust.com